ການປູກໝາກຮຸ່ງຮອນແລນ

ໂດຍ: ຫົງທອງ ເພັດວິໄຊ, ພະແນກບໍລິຫານ ສຄກປ

ໝາກຮຸ່ງ ເປັນໝາກໄມ້ທີ່ຊາວກະສິກອນ ນິຍົມກັນປູກຫຼາຍເພາະເປັນພືດທີ່ໃຫ້ຜົນຜະລິດໄວ, ຜູ້ປູກສາມາດປູກແຊມ ໃນພືດຫຼັກກ່ອນໃຫ້ຜົນຜະລິດ ຫຼື ປູກເປັນພືດຫຼັກ ເພື່ອຈຳໜ່າຍເປັນສິນຄ້າໂດຍກົງ,ໃນແງ່ຂອງຜູ້ບໍລິໂພກແລ້ວ ໝາກຮຸ່ງ ເປັນໝາກໄມ້ທີ່ໃຫ້ຄວາມນິຍົມກັນກິນຫຼາຍ ເຊັ່ນວ່າ ຕຳໝາກຮຸ່ງ ຫຼື ເອົາໄວ້ກິນສຸກ ເພາະວ່າກິນແລ້ວບໍ່ອ້ວນແຖມຍັງຊ່ວຍລະບົບຂັບຖ່າຍໄດ້ດີນຳອີກ.

ລັກສະນະທົ່ວໄປ

ໝາກຮຸ່ງຊະນິດນີ້ ລຳຕົ້ນໃຫຍ່, ສີຂຽວ, ໃບມີ 11 ແຊກໃຫຍ່, ກາງໃບມີໂຄງໃບ 1 ໃບ, ກ້ານໃບສີຂຽວຕັ້ງຂຶ້ນ, ດອກອອກເປັນຊໍ່, ມີໝາກດົກ, ອາຍຸການເກັບກ່ຽວ 8 ເດືອນ, ນ້ຳໜັກປະມານ 8 ຂີດ-2 ກິໂລ/1 ໜ່ວຍ. ຊີ້ນເປັນສີແດງອົມສົ້ມບໍ່ເລະ, ຊີ້ນໜາ 2.5-3.0 ຊຕມ ແລະ ຫວານ, ຜົນຜະລິດຕໍ່ຕົ້ນ60-80 ກິໂລ, ຈຸດເດັ່ນທີ່ສັງເກດໄດ້ງ່າຍວ່າໝາກຮຸ່ງຊະນິດນີ້ເປັນແນວໃດນັ້ນ ທີ່ປາຍໝາກຂອງມັນ ຈະກ້ຽງລຽບມົນບໍ່ເປັນກະຕູດກະຕີດ . ຫຼັງຈາກປູກໄດ້ 3 ເດືອນ ໝາກຮຸ່ງກໍຈະອອກດອກ, ຈະມີທັງດອກໂຕແມ່ ແລະ ດອກກະເທີຍ, ກ່ອນດອກບານ ຜູ້ປູກຈະຕ້ອງຫໍ່ດອກກະເທີຍດ້ວຍມຸ້ງ ຫຼື ຜາຂາວບາງໆ ເພື່ອໃຫ້ມີການປະສົມເກສອນຕົວເອງ ແລະ ບໍ່ປະສົມຂ້າມພັນກັບຕົວອື່ນໆ, ເມື່ອໝາກຮຸ່ງສຸກແກ່ ກໍ່ນຳແກ່ນໄປກ້າໃຫ້ໄດ້ຕົ້ນໃໝ່ ຊຶ່ງຈະໄດ້ຜົນກະເທີນ 70-80%.

ວິທີການປູກ ແລະ ບົວລະບັດ

ສາມາດປູກໄດ້ທຸກສະພາບພື້ນທີ່ ຍົກເວັ້ນພື້ນທີ່ທີ່ມີນ້ຳຂັງ, ດິນທີ່ເໝາະສົມ ມີຄວາມເປັນກົດເປັນດ່າງ 5.5-5.0 ໄລຍະປູກ 2.5x3 ແມັດ, ໄລ່ນຶ່ງສາມາດປູກໄດ້ 224 ຕົ້ນ, ຫຼັງປູກແລ້ວ ຕ້ອງໃຫ້ນາໍ້ສະໝ່ຳສະເໝີ , ໝາກຮຸ່ງຈະໃຫ້ຜົນຜະລິດດີ, ປຸຍທີ່ໃສ່ໃຫ້ເລີ້ມຕົ້ນຈາກປຸຍໝັກ ແລະ ຝຸ່ນຄອກ ສຳລັບປຸຍວິທະຍາສາດໃຫ້ໃຊ້ສູດ 15-15-15 ໃນໄລຍະທີ່ຕິດໝາກອ່ອນ, ກ່ອນການເກັບກ່ຽວໃຫ້ໃຊ້ສູດ 13-13-21 ໃສ່ອ້ອມໆຕົ້ນ ຈຳນວນ 1 ບ່ວງໃຫຍ່/ຕົ້ນ.

ລະດູເກັບກ່ຽວ

ເມື່ອປູກໄດ້ 7-8 ເດືອນ ໝາກຮຸ່ງຈະສຸກແກ່ເລີ້ມເກັບຜົນຜະລິດໄດ້, ຖ້າບົວລະບັດຮັກສາປານກາງ ຈະໄດ້ຜົນຜະ

ລິດ ປະມານ 5-8 ໂຕນ/ໄລ່, ວິທີການເກັບກ່ຽວນັ້ນ ເລືອກເກັບສະເພາະໝາກທີ່ສຸກ 5-10% ຄືຜີວນອກມີແຕ້ມສີເຫຼືອງເລັກໜ້ອຍ ແມ່ນສາມາດເກັບກ່ຽວໄດ້.